# ເຫດການປັ້ນປາຍຂອງແຜ່ນດິນໂລກ

1 ນັກຂ່າວ: ເຫດການທຸກວັນນີ້ ເປັນຂ່າວທີ່ເຮົາບໍ່ເຄີຍໄດ້ຍິນໄດ້ຟັງມາກ່ອນໃນຊີວິດ ແມ່ນ້ຳລຳທານຮ້ອຍໜອງຄອງບຶງກໍໄຫລນອງລົ້ນຝັ່ງ ລົມພັດກະໜ່ຳຊ້ຳຊາກ ໄຟຟ້າກໍດັບທັງເມືອງ ພາຍຸໃຫຍ່ພັດຜ່ານເມືອງທາງໃຕ້ ແລະຂນະທີ່ກຳລັງເວົ້າກັນຢູ່ນີ້ ມີຄວາມຮູ້ສຶກວ່າເໝືອນຢູ່ກາງທະເລໃຫຍ່ ແຜ່ນດິນໄຫວ! ບໍ່ເຄີຍເຫັນດິນຟ້າອາກາດປັ້ນປ່ວນເຊັ່ນນີ້ໃນຊີວິດ ຂໍໃຫ້ທຸກຄົນໄດ້ຊອກຫາທີ່ເພິ່ງແລະຫລົບລີ້ພົ້ຍອັນຕຣາຍດຽວນີ້ເລີຍ ບໍ່ຕ້ອງລໍຊ້າ!

## ຄຳນຳ

2 ພຣະຄັມພີມີຄຳພຍາກອນສອນສັ່ງເຮົາຢ່າງໜ້າວິຕົກ ເປັນຄັມພີໂບຮານສັກສິດ ມີຕົວເລກ ເປັນສັນຍາລັກ ມີຄວາມໝາຍ ລ້ວນບົ່ງບອກເຖິງເຫດການທີ່ກຳລັງຈະເກີດຂຶ້ນໃນອານາຄົດອັນນັ້ ໆ ນີ້

3 ເຮົາພໍຈະເຂົ້າໃຈຄວາມໝາຍເຫລົ່ານີ້ໄດ້ບໍ່? ເຄື່ອງໝາຍສັດຮ້າຍນັ້ນຄືອັນໃດ? ຄົນທົ່ວໄປໄດ້ເວົ້າກັນວ່າ ເປັນຄອມພິວເຕີທີ່ຝັງໃຕ້ຜິວໜັງຂອງເຮົາ ຫລືບໍ່ກໍເປັນຂອງໜ້າຢ້ານໜ້າກົວທີ່ເຮົາບໍ່ເຄີຍຮູ້ເຄີຍເຫັນມາກ່ອນ ແລະເຣື່ອງພຣະຄຣິດຫຽມເທັດສັດຕຣູຜູ້ຮ້າຍກາດຂອງພຣະຄຣິດໄດ້ມາປາກົດຫລືຍັງ? ຫລືວ່າຍັງລີ້ຕົວຢູ່? ຫລືພວກກໍ່ການຮ້າຍຈະກໍ່ເຫດການຮຸນແຮງນຳຄວາມທຸກແສນສາຫັດແກ່ຊາວໂລກ? ເຮົາຈະເຫັນສົງຄາມລ້າງໂລກອາຣະມະເຄດອນ ແລະພັຍທໍຣະມານສຸດທ້າຍເຈັດປະການນີ້ຫລືບໍ່? ເຮົາຈະຕ້ອງເຮັດແນວໃດແດ່ທີ່ຈະບໍ່ຕ້ອງຖືກຖິ້ມໄວ້ໃນໂລກນີ້ເມື່ອພຣະເຢຊູຄຣິດສະເດັດກັບມາອີກເທື່ອນຶ່ງ? ເຮົາຈະພໍຮູ້ໄດ້ບໍ່ວ່າເມື່ອໃດເປັນວາຣະສຸດທ້າຍຂອງໂລກແລະເຮົາຈະປະເຊີນກັບອັນໃດແດ່?

4 ທີ່ທ່ານກຳລັງຈະໄດ້ເບິ່ງນີ້ ຈະໃຫ້ທ່ານເຂົ້າໃຈວ່າ ພຣະຄັມພີໄດ້ກ່າວອັນໃດແດ່ໃນວາຣະສຸດທ້າຍຂອງໂລກ ຂໍເຊີນພິສູດຄວາມຈິງອັນໜ້າອັສຈັນທີ່ຢູ່ຂ້າງຫລັງ "ເຫດການປັ້ນປາຍຂອງແຜ່ນດິນໂລກ ຈາກຄຳພຍາກອນໃນພຣະຄັມພີ"!

## <u>ຕອນທີ່ 1 ເຄື່ອງໝາຍວັນອະວະສານຂອງໂລກ</u>

5 ຄົນຈຳນວນຫລາຍຈະແລ່ນເຕັ້ນຊອກຫາຄວາມເຂົ້າໃຈໃນສິ່ງທີ່ເກີດຂຶ້ນນັ້ນ." ດານີເອນ 12:4

6 ວາຣະສຸດທ້າຍຂອງໂລກຈະມີແທ້ ໆ ບໍ່ ຖ້າມີແທ້ ເມື່ອໃດໜໍ? ນີ້ເປັນຄຳຖາມທີ່ສຳຄັນຫລາຍຕລອດທຸກຍຸກທຸກສມັຍ ສາສດາພຍາກອນໃນພຣະຄັມພີ ທ່ານດານີເອນໄດ້ທຳນວາຍໄວ້ຢ່າງຊັດເຈນວ່າກ່ອນວັນສິ້ນໂລກນີ້ ເຮົາຈະເຫັນຄວາມຮູ້ທະວີຂຶ້ນຢ່າງຜິດສັງເກດ ສິ່ງນີ້ໄດ້ເກີດຂຶ້ນແລ້ວຫລືບໍ່?

7 ລອງຄິດເບິ່ງຈັກນ້ອຍນຶ່ງດູ່ວ່າ ເມື່ອບໍ່ນານມານີ້ການຄົມນາຄົມໄດ້ປ່ຽນແປງໄປຫລາຍນ້ອຍຂນາດໃດ ເກືອບຕລອດ 6000 ປີທີ່ຜ່ານມາ ມະນຸດໄດ້ເດີນທາງບໍ່ໄວກວ່າຄວາມໄວຂອງມ້າບໍ່ເທົ່າໃດ ດຽວນີ້ການສົ່ງຈອນຊື່ງເມື່ອກ່ອນໃຊ້ເວລານັບເດືອນ ກັບມາເປັນບໍ່ຈັກນາທີ

8 ພຽງຊົ່ວອາຍຸດຽວ ວິທະຍາການຄອມພີວເຕີໄດ້ປ່ຽນຊີວິດຂອງເຮົາ ຢ່າງຄາດຄິດບໍ່ເຖິງ ແມ່ນແຕ່ພໍ່ແມ່ຂອງເຮົາກໍງຸນງົງກັບສິ່ງເຫລົ່ານີ້

9 ຄວາມແມ່ນຍໍາຂອງຄໍາທໍານວາຍນີ້ຄື ຄວາມຮູ້ໃນຄໍາພຍາກອນນີ້ຈະທະວີຂື້ນ ນີ້ກໍໄດ້ເກີດຂື້ນແລ້ວຕາມຄໍາທໍານວາຍ

10 ບໍ່ໃຊ່ມີແຕ່ທ່ານດານີເອນເທົ່ານັ້ນທີ່ກ່າວເຖິງວາຣະສຸດທ້າຍຂອງໂລກ ມີຄໍາພຍາກອນອື່ນອັນໃດອີກແດ່ທີ່ໄດ້ເຊື່ອງຊ້ອນໄວ້ໃນພຣະຄັມພີ?

11 “ພວກທ່ານຈະໄດ້ຍິນເຖິງເຣື່ອງການເສິກ ແລະຂ່າວເລົ່າລືເຖິງເຣື່ອງການເສິກສົງຄາມ ຈົ່ງລະວັງຢ່າຕົກໃຈ ດ້ວຍວ່າເຫດການເຫລົ່ານີ້ຈໍາເປັນຕ້ອງເກີດຂື້ນ ແຕ່ວ່າທີ່ສຸດປາຍຍັງບໍ່ມາເຖິງ... ທັງຈະເກີດການອຶດຢາກແລະແຜ່ນດິນໄຫວໃນບ່ອນຕ່າງ ໆ. ເຫດການທັງປວງນີ້ເປັນເໝືອນຂັ້ນຕົ້ນຂອງຄວາມເຈັບປວດໃນການເກີດລູກ.” ມັດທາຍ 24:6-8

12 ເຮົາຈະເຫັນໄດ້ງ່າຍ ໆ ຈາກເຫດການທີ່ຢູ່ຮອບໂລກນີ້ວ່າ ທັງເວທີການເມືອງແລະພັຍທັມມະຊາດໄດ້ເຮັດໃຫ້ໂລກຂອງເຮົາບໍ່ເປັນທີ່ປອດພັຍເສັຽແລ້ວ ໃຫ້ຄິດເບິ່ງກໍແລ້ວກັນວ່າ ພາຍໃນຮ້ອຍປີທີ່ຜ່ານມານີ້ໂລກຂອງເຮົາໄດ້ຜ່ານສົງຄາມໂລກເຖິງສອງຄັ້ງແລ້ວ ແລະຍັງມີການຣົບລາຂ້າຟັນກັນອີກນັບບໍ່ຖ້ວນ ບໍ່ຕ້ອງຄິດເຖິງເຣື່ອງກໍ່ການຮ້າຍທີ່ກໍາລັງທະວີຄວາມຮຸນແຮງແລະຖີ່ຂື້ນ

13 ລວມທັງທັມມະຊາດທີ່ຮ້າຍແຮງເຂົ້າໄປອີກເຊັ່ນ ແຜ່ນດິນໄຫວ, ໄຟໄໝ້, ນໍ້າຖ້ວມ, ພາຍຸຮ້າຍ, ທໍາລາຍຊີວິດອາກາດປັ່ນປ່ວນ ສິ່ງເຫລົ່ານີ້ລ້ວນນໍາຄວາມສັບສົນວຸ່ນວາຍມາສູ່ໂລກຂອງເຮົາທັງສິ້ນ

14 ໜ້າງຶດຫລາຍ ທີ່ທ່ານໂຢຮັນໄດ້ທໍານວາຍໄວ້ວ່າ ເຄື່ອງໝາຍແຫ່ງວັນສິ້ນໂລກອີກຢ່າງນຶ່ງກໍຄືຄວາມສາມາດຂອງມະນຸດທີ່ທໍາລາຍແຜ່ນດິນໂລກ ໃນພຣະຄັມພີ ພຣະນິມິດ ບົດທີ່ 11 ຂໍ້ 18 ທີ່ທ່ານໄດ້ກ່າວໄວ້ວ່າ “ເຖິງເວລາແລ້ວທີ່ພຣະອົງຈະຊົງທໍາລາຍພວກຄົນທີ່ທໍາລາຍແຜ່ນດິນໂລກ”

15 ກໍເຫັນວ່າແມ່ນແທ້ຢູ່ແລ້ວຄໍາພຍາກອນຂໍ້ນີ້ໄດ້ເກີດຂຶ້ນຕາມຄໍາທໍານວາຍອີຫລີ ເປັນເວລາຮ້ອຍ ໆ ປີ ທີ່ການຕໍ່ສູ້ກັບສັດຕຣູຂອງມຸດຢ່າງມາກມາຍ ກໍພຽງແຕ່ຍິງປືນໃຫຍ່ໃສ່ກັນເທົ່ານັ້ນ ແຕ່ບັນດາອາວຸດທີ່ເຂົາສ້າງຂື້ນມາປະຫານກັນນັ້ນມັນຮ້າຍແຮງ ຈຶ່ງສາມາດລ້າງຊີວິດເທິງໂລກນີ້ໄດ້ຈົນໝົດກ້ຽງ

16 ພຣະຄຣິດໄດ້ທໍານວາຍໄວ້ວ່າ ຖ້າພຣະອົງຍຶດເວລາກັບມາຂອງພຣະອົງ ຄືບໍ່ໃຫ້ມີຄົນເຫລືອໃນໂລກນີ້ເລີຍ

17 ພຣະອົງໄດ້ຊົງເຕືອນເຮົາວ່າ ເຮົາຈະຕ້ອງປະເຊີນກັບພັຍອັນຕຣາຍເຫລົ່ານີ້ ແຕ່ນີ້ເປັນພຽງເບື້ອງຕົ້ນແຫ່ງຍຸກສຸດທ້າຍເທົ່ານັ້ນ ເປັນໄປໄດ້ບໍ່ວ່າ ມະນຸດຈະເປັນຜູ້ຈຸດສນວນວາຣະສຸດທ້າຍຂອງໂລກນີ້ເອງ

18 "ແຕ່ຈົ່ງຮູ້ຂໍ້ຄວາມນີ້ວ່າ ໃນຄາວທີ່ສຸດນັ້ນຈະເກີດຄວາມລໍາບາກຢ່າງຮ້າຍແຮງ. ເພາະວ່າຄົນທັງຫລາຍຈະເຫັນແກ່ຕົວ, ເຫັນແກ່ເງິນຄໍາ, ອວດຕົວ, ຈອງຫອງ, ຊອບດ່າວ່າ, ບໍ່ເຊື່ອຟັງຄວາມພໍ່ແມ່, ເນຣະຄຸນ, ເປັນຄົນບໍ່ມີສິນທັມ, ເປັນຄົນຂາດມະນຸສທັມ, ບໍ່ຍອມຜ່ອນຜັນຜູ້ໃດ, ໃສ່ຮ້າຍປ້າຍສີກັນ, ບໍ່ຮູ້ຈັກບັງຄັບຕົນ, ມີໃຈໂຫດຮ້າຍ, ເປັນຄົນບໍ່ຮັກການດີ, ເປັນຄົນທໍຣະຍົດ, ດື້ດ້ານ, ອວດສະຫາວ, ແລະເປັນຄົນຮັກຄວາມສນຸກຫລາຍກວ່າຮັກພຣະເຈົ້າ." 2 ຕີໂມທຽວ 3:1-3

19 ໃຜທີ່ມີຊີວິດຢູ່ໃນຊ່ວງຫລາຍສິບປີຜ່ານມານີ້ ຄົງປະຕິເສດບໍ່ໄດ້ແນ່ວ່າ ສິລທັມໃນສັງຄົມໄດ້ເຊື່ອມລົງຢ່າງໜ້າຢ້ານໜ້າກົວ ຕ່າງກໍຍອມປະພຶດຂອງຄົນໃນຊ່ວງອາຍຸຂອງຕົນ ຜົນກໍຄືຄົນໃນຊ່ວງອາຍຸນີ້ກໍມີຄວາມເລວກວ່າຄົນໃນສມັຍກ່ອນສເມີມາ ແລະມັນກໍສິ້ນສຸດກັນຕົງໃດ

20 ໃນສມັຍຂອງໂນອາ ເພາະຄວາມເຊື່ອມສິລທັມ ໃນໂລກຈຶ່ງລ້າງຜານດ້ວຍນໍ້າ ໃນສມັຍຂອງໂລດຊາວເມືອງໂຊໂດມ ໂກໂມຣາມີຄວາມຊົ່ວໃນການວິຕະຖານ ຈົນໄຟຈາກສວັນໄດ້ທໍາລາຍສອງເມືອງນີ້ຢ່າງສິ້ນເຊີງ

21 "ສມັຍຂອງໂລດກໍເໝືອນກັນ ເຂົາໄດ້ກິນໄດ້ດື່ມ, ໄດ້ຊື້ໄດ້ຂາຍ, ໄດ້ປູກຝັງໄດ້ກໍ່ສ້າງ, ແຕ່ໃນວັນທີ່ໂລດໄດ້ອອກໄປຈາກເມືອງໂຊໂດມ ໄຟແລະມາດໄດ້ຕົກຈາກຟ້າມາເຜົາຜານໃຫ້ເຂົາຈິບຫາຍໄປໝົດ. ໃນວັນທີ່ບຸດມະນຸດຈະມາປາກົດກໍຈະເປັນຢ່າງນັ້ນ." ລູກາ 17:28-30

22 ໃນສມັຍຂອງເຮົາກໍເຊັ່ນກັນ ເພາະຄວາມເຊື່ອມຊາມທາງສິລທັມແລະການໃຊ້ຮ່າງກາຍທີ່ຜິດທັມມະດາກໍອາດເປັນສນວນການພິພາກສາຈາກສວັນໄດ້?

23 ພ້ອມ ໆ ກັບການເຊື່ອມທາງສິລທັມນີ້ ພຣະຄັມພີໄດ້ທຳນວາຍໄວ້ວ່າຈະມີການ ຜູ້ຊີງຖືກຜີເຂົ້າເຈົ້າສິງເພີ່ມຫລາຍຂື້ນດ້ວຍ

24 "ພຣະວິນຍານຊົງກ່າວໄວ້ໂດຍແຈ່ມແຈ້ງວ່າ ໃນຄາວພາຍໜ້າຈະມີລາງຄົນປະຖິ້ມຄວາມເຊື່ອໂດຍຫັນໄປເຊື່ອຟັງວິນຍານທີ່ລໍ້ລວງ ແລະຟັງຄຳສອນຂອງພວກຜີຮ້າຍ." 1 ຕີໂມທຽວ 4:1

25 ການຕິດຕໍ່ກັບພວກທີ່ຕາຍໄປແລ້ວ ຊຶ່ງພຣະຄັມພີໄດ້ກ່າວຫ້າມໄວ້ ກໍເປັນທີ່ນິຍົມຢ່າງກວ້າງຂວາງໂດຍສະເພາະໃນກຸ່ມຄົນໜຸ່ມສາວ ແມ່ນແຕ່ໃນໂບດ ຣາຍການທີວີ ພາບພຍົນກໍເອົາເຣື່ອງຂອງພວກພໍ່ມົດໝໍຜີອອກເຜີຍແຜ່ກັນຫລາຍຂື້ນ

26 ໃນຂນະທີ່ສິລທັມເຊື່ອມແລະລັດທິຜີເຂົ້າເຈົ້າສິງທະວີຂື້ນ ພຣະຄັມພີກໍໄດ້ສອນດ້ວຍວ່າທີ່ໃດມີຄວາມບາບກັມຊົ່ວຫລາຍ ທີ່ນັ້ນພຣະຄຸນຂອງພຣະເຈົ້າກໍຈະເພີ່ມຫລາຍຂື້ນທີ່ນັ້ນດ້ວຍ ຂ່າວດີຂອງຄົນໃນຍຸກບັ້ນປາຍຂອງໂລກນີ້ ຄືພຣະສັນຍາຂອງພຣະເຢຊູ ທີ່ຈະໃຫ້ຂ່າວດີນີ້ປະກາດໄປທົ່ວໂລກ

27 "ຂ່າວປະເສີດເຣື່ອງຣາຊອານາຈັກນີ້ຈະໄດ້ປະກາດໄປທົ່ວໂລກ ເພື່ອເປັນຄຳພຍານແກ່ທຸກ ໆ ຊາດແລ້ວທີ່ສຸດປາຍຈະມາເຖິງ." ມັດທາຍ 24:14

28 ການປະກາດຂ່າວນີ້ ຊຶ່ງສມັຍກ່ອນເກືອບຈະເປັນໄປບໍ່ໄດ້ ແຕ່ດຽວນີ້ເຫັນຊັດເຈນວ່າເປັນຈິງຂື້ນມາທຸກເວລາໂດຍທາງໜັງສື ເທບ ຜູ້ສອນສາສນາ ວິທະຍຸ ໂທຣະຊັບ ອິນເຕີເນັດ ຂ່າວດີນີ້ກໍປະກາດໄປທົ່ວໂລກຢ່າງວ່ອງໄວ ບໍ່ມີສມັຍໃດທີ່ຂ່າວແຫ່ງຄວາມລອດນີ້ຈະກະຈາຍໄປຢ່າງວ່ອງໄວເທົ່າກັບໃນສມັຍນີ້

29 ພຣະຄັມພີໄດ້ເຜີຍໃຫ້ຮູ້ຢ່າງຊັດເຈນວ່າເຮົາຢູ່ໃນສມັຍທີ່ສຸດປາຍຂອງໂລກຢ່າງແນ່ແທ້ ເຄື່ອງໝາຍແຫ່ງວັນສຸດທ້າຍກຳລັງເປັນຈິງຂື້ນມາທຸກເວລາ

30 ແຕ່ພຣະຄັມພີເຕືອນອີກວ່າ ການຕໍ່ສູ້ລະຫວ່າງຄວາມດີແລະຄວາມຊົ່ວນີ້ເອງ ທີ່ຈະກໍ່ໃຫ້ເກີດສົງຄາມ ສົງຄາມລ້າງໂລກ ອາຣະມະເຄດອນ ໃນບໍ່ຊ້າບໍ່ນານນີ້ ອາດຈະມີເຫດການຮ້າຍແຮງຂື້ນໃນໂລກຊຶ່ງຈະນຳໃຫ້ທັງໂລກເຂົ້າສູ່ໃນຍຸກບໍ່ເຄີຍມີມາກ່ອນໃນປະວັດສາດ

31 "ດ້ວຍວ່າໃນຄາວກ່ອນນັ້ນຈະມີຄວາມທຸກລຳບາກອັນໃຫຍ່ຫລວງຢ່າງບໍ່ເຄີຍເກີດມີມາຕັ້ງແຕ່ຕົ້ນເດີມໂລກຈົນເຖິງບັດນີ້ ແລະເມືອໜ້າຈະບໍ່ມີຕໍ່ໄປອີກຈັກເທື່ອ." ມັດທາຍ 24:21

32 ຈະມີພັຍວິບັດຮ້າຍແຮງອັນໃດທີ່ຈະເປັນສນວນນຳມາຊຶ່ງວາຣະສຸດທ້າຍຂອງໂລກຈະເກີດຂື້ນເມື່ອໃດ? ຈະມາຈາກພວກກໍ່ການຮ້າຍຫລື? ຫລືຈາກເສດຖະກິດປັ້ນປ່ວນຂອງໂລກ? ຫລືແຜ່ນດິນໄຫວໃຫຍ່, ຫລືຈາກອຸທາບາດ ຫລືເຫດຮ້າຍຢ່າງໃດຢ່າງນຶ່ງ? ຫລືພິນຮ້າຍທາງເຄມີ-ຊີວະໂຣກ, ຫລືບໍ່ກໍ່ຈາກທຸກຢ່າງຮວມກັນ ພຣະຄັມພີບໍ່ໄດ້ບົ່ງບອກຊັດເຈນລົງໄປວ່າຈະເກີດອັນໃດຂື້ນ ພຽງແຕ່ໄດ້ບົ່ງວ່າຈະມີອັນໃດເກີດຂື້ນຕາມມາ

33 ຕອນຕໍ່ໄປທ່ານຈະໄດ້ສຶກສາເພີ່ມຂື້ນອີກວ່າ ເຫດການບັ້ນປາຍຂອງໂລກໜ້າຢ້ານກົວຢ່າງໃດ ແມ່ນແຕ່ຄຣິສະຕຽນເອງກໍ່ບໍ່ມີໃຜໄດ້ຕຽມພ້ອມຢ່າງພຽງພໍທີ່ຈະຜະເຊີນກັບເຫດການນີ້

## <u>ຕອນ 2 ໂລກແບ່ງເປັນສອງຝ່າຍ</u>

34 ເມື່ອຄວາມທຸກຮ້ອນຢ່າງແສນສາຫັດເກີດຂື້ນ ພວກຜູ້ນຳຂອງໂລກກໍ່ມົວສາຣະວົນຢູ່ກັບບັນຫາເຫລົ່ານີ້ ຂນະດຽວກັນພວກຄຣິສະຕຽນທີ່ແທ້ຈິງກໍ່ໄດ້ຮັບພຣະວິນຍານແບບສຸດທ້າຍຢ່າງທັນອົກທັນໃຈ

35 “ຫລັງຈາກນີ້ຂ້າພະເຈົ້າໄດ້ເຫັນເທວະດາອີກຕົນນຶ່ງກຳລັງລົງມາຈາກສວັນ ມີອຳນາດອັນໃຫຍ່ຫລວງ ແລະແຜ່ນດິນໂລກໄດ້ສວ່າງຂື້ນດ້ວຍຣັສມີຂອງຕົນນັ້ນ.” ພຣະນິມິດ 18:1

36 ຣິດອຳນາດອັນໃຫຍ່ຫລວງທີ່ໃຫ້ຄົນຂອງພຣະເຈົ້າໄດ້ຮັບຄວາມສວ່າງນີ້ຄືພຣະວິນຍານບໍຣິສຸດ ເຂົາປະກາດພຣະທັມຂອງພຣະເຈົ້າດ້ວຍຄວາມກ້າຫານ ເຂົາໄດ້ຊ່ອຍໃຫ້ໂບດຂອງພຣະເຈົ້າກັບໃຈແລະໃຫ້ຊາວໂລກເຂົ້າຫາພຣະຄຣິດ ເຂົາຍຶດພຣະທັມຢ່າງໝັ້ນຄົງ ແລະຮຽກຮ້ອງໃຫ້ຄົນທັງຫລາຍກັບຈາກຄວາມບາບແລະຍຶດຖືພຣະບັນຍັດຂອງພຣະເຈົ້າໄວ້ ຂນະການຟື້ນຟູນີ້ແຜ່ໄປທົ່ວໂລກ ພຣະວິນຍານບໍຣິສຸດໄດ້ຊົງດົນໃຈສາສນາຈານແລະສະມາຊິກໃຫ້ຊ່ອຍໂລກຮັບເອົາຄວາມລອດ

37 ຂນະທີ່ງານຂອງພຣະວິນຍານບໍຣິສຸດເພີ່ມຄວາມເຂັ້ມແຂງຂື້ນ ງານຂອງພວກຜີເຂົ້າເຈົ້າສິງກໍ່ເພີ່ມຂື້ນດ້ວຍ ເຫລົ່າເທວະດາຊົ່ວໄດ້ປອມແປງເປັນຄົນທີ່ເຮົາຮັກນັບຖືທີ່ໄດ້ຕາຍຈາກໄປ ຫລືປອມເປັນຄົນໃນສມັຍພຣະຄັມພີເກົ່າກ່ອນພຸ້ນ ເຂົາໄດ້ກ່າວຄຳທີ່ເຕັມໄປດ້ວຍສັນຕິສຸກແລະຄຳສອນທີ່ມີຄ່າ ແຕ່ເຈືອປົນຫລັກຄວາມເຊື່ອທີ່ຜິດ ໆ ໄວ້ ສຳລັບເຣື່ອງນີ້ ພຣະຄັມພີກ່າວເຕືອນໄວ້ວ່າ

38 “ດ້ວຍວ່າຜີເຫລົ່ານັ້ນເປັນຜີຮ້າຍທີ່ເຮັດໝາຍສຳຄັນ...” ພຣະນິມິດ 16:14

39 ທ່ານກໍ່ຄົງຈະຮູ້ແລ້ວວ່າ ການເຮັດສິ່ງມະຫັດສະຈັນເຫລົ່ານີ້ມີອິດທິພົນກັບຄົນທັງຫລາຍຢ່າງຫລວງຫລາຍ ຈຶ່ງມີຄົນໜ້ອຍທີ່ສຸດຈະກ້າໂຕ້ແຍ້ງຂັດຂວາງການກະທຳນີ້

40 ພໍມາເຖິງຈຸດນີ້ ໂບດແລະສະຖາບັນຄອບຄົວແທບເຮັດອັນໃດບໍ່ໄດ້ເລີຍ ທີ່ຈະຢັບຢັ້ງຄວາມຊົ່ວທີ່ກຳລັງຄຸກຄາມໄປທົ່ວໂລກ ໃນຄວາມຍຸ້ງເຫຍີງທາງການເມືອງ ທາງສິລທັມແລະພາວະສິ່ງແວດລ້ອມທີ່ເລວລົງ ຄົນເຮົາຍ່ອມສແວງຫາທາງທີ່ຈະຊ່ອຍແກ້ໄຂບັນຫາທີ່ກຳລັງຢຳແຢ້ຂອງໂລກ

41 ຜູ້ນຳສາສນາແລະການເມືອງໄດ້ແນະນຳໃຫ້ມີການປ່ຽນຣັຖທັມມະນູນແລ້ວອອກກົດໝາຍທີ່ຈະຢັບຢັ້ງຄວາມເຊື່ອມທາງສິລທັມ ໃນທີ່ສຸດເມື່ອຖືກບີບຫລາຍຂຶ້ນ ຣັຖບານກໍຕ້ອງອອກກົດໝາຍ ເຖິງຈະຂັດກັບພຣະບັນຍັດຂອງພຣະເຈົ້າກໍຕາມ

42 ແຕ່ນີ້ບໍ່ໃຊ່ເຣື່ອງແປກໃນປະວັດສາດ ທ່ານຄົງຈຳໄດ້ເຣື່ອງທີ່ເກີດຂຶ້ນໃນດານີເອນບົດທີ່ 3 ເມື່ອກະສັດເນບູຄັດເນດຊາແຫ່ງບາບີໂລນໄດ້ສັ່ງໃຫ້ຂ້າຣາຊການຂອງພຣະອົງກົບລົງມາກາບຮູບປັ້ນທອງຄຳອັນມະຫຶມາທີ່ພຣະອົງໄດ້ສ້າງຂຶ້ນ ມີຊາຍໜຸ່ມເຮັບເຣີສາມຄົນປະຕິເສດ ເພາະມັນຂັດກັບພຣະບັນຍັດຂໍ້ທີ່ສອງຂອງພຣະເຈົ້າທີ່ໄດ້ຫ້າມບໍ່ໃຫ້ໄຫວ້ຮູບເຄົາຣົບ ເຂົາແນ່ວແນ່ທີ່ຈົງຮັກພັກດີຕໍ່ພຣະເຈົ້າ ເຂົາບໍ່ຍອມກົ້ມໄຫວ້ຮູບເຄົາຣົບນັ້ນ ກະສັດຊົງໂກດແລະໂມໂຫ ສັ່ງໃຫ້ໂຍນທັງສາມຄົນລົງໃນເຕົາໄຟ ແຕ່ພຣະເຈົ້າໄດ້ຊົງຊ່ອຍພວກເຂົາໄວ້

43 ແລະເຣື່ອງຂອງດານີເອນທີ່ຖືກໂຍນລົງໄປໃນຖ້ຳສິງໂຕ ກະສັດເປີເຊັຍໄດ້ອອກກົດໝາຍຫ້າມບໍ່ໃຫ້ໃຜອ້ອນວອນພຣະເຈົ້າອົງໃດໃນ 30 ວັນນອກຈາກພຣະອົງ ແຕ່ດານີເອນຮູ້ດີວ່າ ຖ້າເຂົາເຮັດຕາມກົດໝາຍນີ້ເຂົາກໍຜິດພຣະບັນຍັດຂໍ້ທີ່ 1 ດ້ວຍຄວາມເດັດດ່ຽວ ດານີເອນ ໄດ້ອະທິຖານຕໍ່ພຣະເຈົ້າຢ່າງເປີດເຜີຍ ເຖິງແມ່ນຈະເປັນການເສັ່ຽຊີວິດກໍ່ຕາມ ສັດຕຣູຂອງດານີເອນໄປຟ້ອງກະສັດທັນທີ ຈົນພຣະອົງຕ້ອງສັ່ງໃຫ້ໂຍນຜູ້ທີ່ພຣະອົງວາງພຣະທັຍລົງໃນຖ້ຳສິງໂຕ ແຕ່ພຣະເຈົ້າກໍໄດ້ຊົງສຳແດງຣິດໂດຍຊ່ອຍດານີເອນໄວ້ອີກ

44 ສມັຍຍຸກສຸດທ້າຍນີ້ກໍເຊັ່ນກັນໃນພຣະຄັມພີພຣະນິມິດໄດ້ທຳນວາຍໄວ້ວ່າອຳນາດແຫ່ງຄວາມຊົ່ວຈະບີບຣັຖບານຂອງປະເທດຕ່າງ ໆ ໃນໂລກໃຫ້ອອກກົດໝາຍມາບັງຄັບໃຫ້ປະຊາຊົນວ່າ ຄວນຈະນະມັດສະການພຣະເຈົ້າຢ່າງໃດ ກົດໝາຍນີ້ເບິ່ງຜິວເຜີນກໍເໝືອນວ່າຈະຊ່ອຍໃຫ້ສິລທັມດີຂຶ້ນ ແຕ່ທີ່ແທ້ແລ້ວມັນຈະຕຽມຊາວໂລກໃຫ້ຮັບເຄື່ອງໝາຍຂອງສັດຮ້າຍແລະພຣະຄຣິດຈອມປອມຕ່າງຫາກ

45 "ດ້ວຍວ່າຈະມີພຣະຄຣິດທຽມແລະໝໍທຳນວາຍຂີ້ໂລບຫລາຍຄົນເກີດຂຶ້ນ ສະແດງໝາຍສຳຄັນອັນໃຫຍ່ແລະການອັສຈັນຕ່າງ ໆ ເພື່ອຖ້າເປັນໄດ້ ຈະຫລອກລວງຜູ້ທີ່ພຣະເຈົ້າຊົງເລືອກໄວ້ໃຫ້ຫລົງ." ມັດທາຍ 24:24

46 ຂນະທີ່ບັນຫາຕ່າງ ໆ ກຳລັງດັ່ງເຂົ້າມາ ຄົນສແວງຫາສັນຕິສຸກຂອງໂລກ ກໍມີຄຳຕອບມາຢ່າງປລາດ ມີຂ່າວປະກາດມາຈາກບ່ອນຕ່າງ ໆ ທົ່ວໂລກ "ພຣະເຢຊູສະເດັດມາ ພຣະອົງສະເດັດມາແລ້ວ"

47 ບຸຣຸດທ່າທາງໜ້າຮັກໜ້ານັບຖືປາກົດຂື້ນ ອ້າງວ່າເປັນບຸດຂອງພຣະເຈົ້າ ມີຄົນແຫ່ໄປພົບທ່ານຜູ້ນີ້ທີ່ສາມາດເຮັດການອັສຈັນໄດ້ສາລະພັດ ຄົນໄດ້ຍິນທ່ານຜູ້ນີ້ກ່າວສອນດັ່ງທີ່ພຣະເຢຊູໄດ້ຕຣັດສອນໃນພຣະຄັມພີນັ້ນ ເຫດການນີ້ໄດ້ອອກອາກາດໄປທົ່ວໂລກ ເມື່ອຄົນທັງຫລາຍໄດ້ເຫັນ ຕ່າງກໍພາກັນ ວ່າພຣະຄັມພີໄດ້ສຳເຣັດແລ້ວທີ່ວ່າ "ໃນຕາທຸກໜ່ວຍຈະເຫັນພຣະອົງ"

48 ບັນດາສາສນາຕ່າງ ໆ ພາກັນລໍຄອຍພຣະຜູ້ຊ່ອຍທີ່ຈະມາຢູ່ແລ້ວ ແລະບຸຣຸດຜູ້ວິເສດນີ້ດູເໝືອນວ່າເປັນຜູ້ທີ່ມາຕາມຄຳອະທິຖານຂອງເຂົາແທ້ ແລະພຣະຄັມພີໄກຣິນໂທສະບັບທີ່ສອງ ໄດ້ ກ່າວເຕືອນໄວ້ວ່າຊາຕານຈະປອມຕົວມາໃນຮ່າງຂອງເທວະດາແຫ່ງຄວາມສວ່າງ

49 ໜ້າເສົ້າແທ້ ໆ ຜູ້ທີ່ຄົນທັງຫລາຍອ້າແຂນຮັບນີ້ແມ່ນພຣະເຢຊູແທ້ບໍ່ ແຕ່ເປັນຊາຕານປອມຕົວມາໃນຮ່າງຂອງພຣະບຸດຂອງພຣະເຈົ້າ ໂດຍການກະທຳເຊັ່ນນີ້ຊາຕານສາມາດທີ່ຈະຮວມຊາວໂລກເພື່ອການນະມັດສະການແບບຈອມປອມນັ້ນເອງ ດັ່ງນັ້ນມັນໄດ້ເຮັດການຫລອກລວງຄັ້ງໃຫຍ່ຫລວງໃນປະວັດສາດຂອງໂລກ

## <u>ຕອນ 3 ການຜ່ອນຜັນໃຫ້ມະນຸດໄດ້ກັບໃຈໃໝ່ໄດ້ສິ້ນສຸດລົງ</u>

50 ການຫລອກລວງຂອງຊາຕານໄດ້ຜົນແລະມີອິດທິພົນຢ່າງຈິງຈັງຕໍ່ຊາວໂລກ ຜູ້ນຳທາງສາສນາສ່ວນຫລາຍຕ່າງພາກັນຍອມຮັບນັກຫລອກລວງຍິ່ງຜູ້ນີ້ ທັງການນະມັດສະການຈອມປອມທີ່ມັນນຳມາສເນີດ້ວຍ

51 ຂນະທີ່ພັຍວິບັດກຳລັງໂຖມກະໜ່ຳທົ່ວໂລກ ພວກຜູ້ນຳຂອງໂບດເຊື່ອວ່າບໍ່ຄວນຈະເສັຽເວລາອີກແລ້ວທີ່ຈະໜ່ວງໜ່ຽວໃຫ້ຊາວໂລກຍອມຮັບຄຳສອນຂອງພຣະຜູ້ຊ່ອຍໃຫ້ລອດຈອມປອມຜູ້ນີ້

52 "ໃນເຣື່ອງນີ້ພວກໄພ່ພົນຂອງພຣະເຈົ້າ ຄືຜູ້ທີ່ຖືຮັກສາຂໍ້ບັນຍັດຂອງພຣະເຈົ້າແລະຄວາມເຊື່ອຝ່າຍພຣະເຢຊູກໍຕ້ອງໃຊ້ຄວາມພຽນອົດທົນ." ພຣະນິມິດ 14:12

53 ມີບາງຄົນບໍ່ຖືກຫລອກແຕ່ເຫັນວ່າພຣະຄັມພີໄດ້ເຕືອນເຖິງການຫລອກລວງອັນໃຫຍ່ຫລວງນີ້ ແລະເຂົາຮູ້ຈຸດໝາຍຂອງພຣະຜູ້ຊ່ອຍຈອມປອມຜູ້ນີ້ວ່າ ຈະນຳຄົນທັງຫລາຍໃຫ້ຫລົງໄປຈາກພຣະບັນຍັດຂອງເຈົ້ານັ້ນເອງ

54 ນີ້ບໍ່ແມ່ນເທື່ອທຳອິດທີ່ຊາຕານປອມເປັນເທວະດາແຫ່ງຄວາມສວ່າງ ເມື່ອຄັ້ງທີ່ພຣະເຢຊູໄດ້ຖືກທົດລອງໃນປ່າກັນດານນັ້ນ ຊາຕານກໍໄດ້ປອມເປັນເທວະດາຜູ້ສູງສົ່ງຂອງພຣະເຈົ້າ ແຕ່ມັນກໍໄດ້ກະຊາກໜ້າກາກຂອງຕົວເອງ ເມື່ອມັນໄດ້ພຍາຍາມຫລອກລວງພຣະເຢຊູໃຫ້ຝືນພຣະບັນຍັດຂອງພຣະເຈົ້າ ແລະນີ້ກໍຈະເປັນອີກເທື່ອນຶ່ງ ທີ່ມັນຈະໃຊ້ກົນລວງຄ້າຍ ໆ ກັນກັບເມື່ອກ່ອນ ເພື່ອຫລອກໃຫ້ຄົນທັງຫລາຍຝ່າຝືນພຣະບັນຍັດຂອງພຣະເຈົ້າ

55 "ບໍ່ມີໃຜສາມາດເປັນຂ້າສອງເຈົ້າບ່າວສອງນາຍໄດ້ ເພາະຈະຊັງນາຍຜູ້ນີ້ແລະໄປຮັກນາຍຜູ້ນັ້ນ ຫລືຈະຕິດພັນກັບນາຍຜູ້ນີ້ແລະປມາດຜູ້ນັ້ນ ທ່ານຈະເປັນຂ້ອຍໃຊ້ຂອງພຣະເຈົ້າແລະເປັນຂ້ອຍໃຊ້ຂອງເງິນຄຳພ້ອມກັນບໍ່ໄດ້." ມັດທາຍ 6:24

56 ຊາວໂລກໄດ້ມາເຖິງເວລາເຂົາຕ້ອງຕັດສິນໃຈ ທັງພຣະຄຣິດທຽມເທັດແລະສະພາບວິກິດຂອງໂລກໄດ້ແບ່ງເປັນສອງຝ່າຍ ຄືຝ່າຍທີ່ເຮັດຕາມພຣະຄັມພີແລະຝ່າຍທີ່ເຮັດຕາມສັດຮ້າຍ ຄົນທັງຫລາຍມີຄວາມເຄັ່ງຄຽດຢ່າງໃຫຍ່ຫລວງ ໃນໃຈຂອງທຸກຄົນໄດ້ແຕ່ຊຸ່ນຄິດເຖິງເຣື່ອງສາສນາ

57 ຄົນທີ່ມີຄວາມເຊື່ອຢ່າງທ່ຽງແທ້ໃນພຣະເຈົ້າຖືກນຳມາຕໍ່ໜ້າຜູ້ນຳຂອງໂລກ ຈົນເປັນຂ່າວທາງທີວີໜັງສືພິມ ແລະການເວົ້າຄວາມໃນສານ ເຂົາຕ່າງໄດ້ໃຊ້ເຫດຜົນທີ່ມີຫລັກຖານອ້າງອີງຈາກພຣະຄັມພີໂຕ້ແຍ້ງການນະມັດສະການຢ່າງຜິດ ໆ ທີ່ຄົນສ່ວນຫລາຍກຳລັງນິຍົມປະຕິບັດກັນຢູ່ ພຣະບັນຍັດຂອງພຣະເຈົ້າແລະການນະມັດສະການພຣະເຈົ້າຢ່າງຖືກຕ້ອງເປັນຫົວຂໍ້ຂອງການໂຕ້ຖຽງຂອງເຂົາ

58 ດ້ວຍການດົນໃຈຈາກພຣະວິນຍານບໍຣິສຸດ ແລະຟັງການໂຕ້ແຍ້ງຢ່າງມີເຫດຜົນຂອງຜູ້ຮັບໃຊ້ທີ່ຊື່ສັດຂອງພຣະເຈົ້າ ຄົນເປັນພັນ ໆ ທົ່ວໂລກຫັນຈາກການນະມັດສະການທີ່ໄຮ້ປໂຍດເຫລົ່ານັ້ນ ພ້ອມກັບຜູ້ເຊື່ອແທ້ຈິງໃນພຣະເຢຊູເຂົາໄດ້ຢືນຍັດເພື່ອຄວາມຈິງທີ່ຖືກຕ້ອງ ແມ່ນບໍ່ເປັນທີ່ນິຍົມຂອງຊາວໂລກກໍຕາມຄຳຖາມທີ່ວ່າ "ເຮົາຄວນເຊື່ອພຣະເຈົ້າຫລືມະນຸດ ພຣະຄັມພີຫລືປະເພນີນິຍົມ?" ທັງໂລກຖືກແບ່ງອອກເປັນສອງຝ່າຍ ຄືກຸ່ມຜູ້ທີ່ໄດ້ຮັບເຄື່ອງໝາຍຂອງພຣະເຈົ້າ ແລະຝ່າຍທີ່ໄດ້ຮັບເຄື່ອງໝາຍຂອງສັດຮ້າຍ

59 "ຝ່າຍຄົນອະທັມກໍໃຫ້ເຮັດການອະທັມຕໍ່ໄປ ຜູ້ທີ່ເປັນຄົນຊົ່ວຊ້າກໍໃຫ້ເຂົາຊົ່ວຊ້າຕໍ່ໄປ ຝ່າຍຄົນຊອບທັມກໍໃຫ້ເຮັດການຊອບທັມຕໍ່ໄປ ແລະຜູ້ທີ່ເປັນຄົນບໍຣິສຸດກໍໃຫ້ເຂົາເປັນຄົນບໍຣິສຸດຕໍ່ໄປ." ພຣະນິມິດ 22:11

60 ພຣະຄັມພີຂໍ້ນີ້ທຳນວາຍເຖິງເວລາເມື່ອຄົນທຸກຄົນ ຊາຍຍິງ ເດັກນ້ອຍ ຈະຕັດສິນໃຈ ຄັ້ງສຸດທ້າຍຮັບຫລືປະຕິເສດພຣະເຢຊູ ຜູ້ທີ່ຢູ່ຝ່າຍພຣະເຈົ້າຄືຄົນເຫລົ່ານັ້ນທີ່ຢືນຍັດເພື່ອພຣະເຈົ້າ ບໍ່ວ່າຈະຖືກຕໍ່ຕ້ານເທົ່າໃດກໍຕາມ ສ່ວນອີກຝ່າຍນຶ່ງນັ້ນຍອມຮັບເອົາຂນົບທັມນຽມຂອງມະນຸດຖືເປັນສາສນາກິດ

61 ດັ່ງປະຕູເຮືອຂອງໂນອາໄດ້ປິດແໜ້ນກ່ອນນ້ຳຖ້ວມໂລກສັນໃດ ປະຕູແຫ່ງພຣະກະຣຸນາຂອງເຈົ້າໃນສມັຍທີ່ສຸດປາຍກໍຈະປິດລົງຕໍ່ຊາວໂລກສັນນັ້ນ ແລະພຣະກະຣຸນາຂອງພຣະເຈົ້າຈະບໍ່ມີອີກຕໍ່ໄປສຳລັບຄົນບາບທີ່ບໍ່ຍອມກັບໃຈ ການສະເດັດກັບມາຂອງພຣະເຢຊູຈະມີແນ່ນອນ ແຕ່ກ່ອນທີ່ເຫດການນີ້ຈະມາເຖິງພັຍວິບັດຢ່າງໃຫຍ່ຫລວງແລະພັຍທໍຣະມານເຈັດປະການຈະອຸບັດແກ່ຊາວໂລກຢ່າງທີ່ບໍ່ເຄີຍມີມາກ່ອນ

62 "ແລ້ວຂ້າພະເຈົ້າໄດ້ຍິນສຽງດັງອອກມາຈາກພຣະວິຫານ ສັ່ງເທວະດາເຈັດຕົນນັ້ນວ່າ, "ຈົ່ງໄປເສັຽເອົາຂັນທັງເຈັດໜ່ວຍທີ່ເຕັມໄປດ້ວຍພຣະພິໂຣດຂອງພຣະເຈົ້າຖອກລົງເທິງແຜ່ນດິນໂລກ." ເທວະດາຕົນແຣກຈຶ່ງອອກໄປເອົາຂັນຂອງຕົນຖອກລົງເທິງແຜ່ນດິນໂລກ ແລະຄົນທັງຫລາຍທີ່ມີເຄື່ອງໝາຍຂອງສັດຮ້າຍ ແລະບູຊາຮູບຂອງມັນ ຈຶ່ງເກີດເປັນຝີຮ້າຍແຮງແລະເຈັບປວດ." ພຣະນິມິດ 16:1-2

63 ຄວາມຫວັງທີ່ຈະເຫັນສະພາບຂອງໂລກດີຂຶ້ນ ກັບພັງທະລາຍໄປກັ່ງງ ເມື່ອພັຍທໍຣະມານອັນທັງເຈັດໃນພຣະຄັມພີພຣະນິມິດໄດ້ເທອອກເທິງໂລກນີ້ ຕິດຕາມກັນມາຢ່າງຕໍ່ເນື່ອງ ເປັນຄວາມພິນາດອັນຮ້າຍແຮງຢ່າງໃຫຍ່ ທີ່ເຄີຍມີມາແລະຄົງບໍ່ມີເຊັ່ນນີ້ອີກໃນພາຍໜ້າ

64 ພັຍທໍຣະມານປະການແຮກທັງໜ້າຢ້ານກົວແລະເຈັບປວດທໍຣະມານໜ້າເວທນາທີ່ສຸດ ເກີດແກ່ຜູ້ທີ່ບໍ່ໄດ້ຮັບຄວາມລອດ ເຂົາມີແຜແຕກເຕັມທັງຕົວຄວນຄາງເຈັບປວດ ແລ້ວກໍຍັງມີພັຍທໍຣະມານອີກ ຫົກປະການຕິດຕາມມາ ນ້ຳໃນແມ່ນ້ຳ ໃນທະເລ ກາຍເປັນເລືອດ ສ່ວນຕະເວັນກໍມີແສງຮ້ອນແຮງເຜົາຜານມວນມະນຸດ

65 ຂນະທີ່ພັຍທໍຣະມານມາຍັງໂລກຂອງເຮົາຄັ້ງແລ້ວຄັ້ງອີກ ຄວາມຢ້ານເຮັດໃຫ້ຊາວໂລກຕົກຕະລຶງພົງເພີດ

66 ໃນຂນະດຽວກັນ ເຫລົ່າຜູ້ທີ່ຊອບທັມທີ່ໄດ້ຮັບຄວາມລອດທັງຫລາຍ ໄດ້ພົບທີ່ຫລົບພັຍໃນປ່າໃນຖ້ຳເທິງພູຜາປ່າດົງອັນເປົ່າປ່ຽວ ໄດ້ຮັບການລ້ຽງເກືອຈາກເທວະດາຜູ້ບໍຣິສຸດ ບາງຄົນກໍຖືກໂຍນເຂົ້າຄຸກອັນເປົ່າປ່ຽວ ແມ່ນວ່າຈະຖືກຖອດຖິ້ມໂດຍມະນຸດ ແຕ່ກໍບໍ່ໄດ້ຖືກລືມໂດຍພຣະເຈົ້າ ພຣະເຈົ້າໄດ້ຊົງປ້ອງກັນຄົນເຫລົ່ານີ້ຈາກພັຍທໍຣະມານທັງປວງ ເຊັ່ນອິສຣະເອນໄດ້ຮັບການຄຸ້ມຄອງຈາກພັຍທໍຣະມານໃນອີຢິບນັ້ນ

67 ຊ່ວງນີ້ ເຫລົ່າຜູ້ສັດຊື່ຕ້ອງຜ່ານເວລາອັນໜ້າຢ້ານ ເຂົາສອບສວນຈິດໃຈຕົວເອງແລະຊຸ່ນຄິດວ່າ "ຂ້າໄດ້ເຮັດທຸກສິ່ງຖືກຕ້ອງໃນພຣະເຈົ້າຫລືບໍ່" ທີ່ສຸດເຂົາກໍພົບສັນຕິສຸກໂດຍການເພິ່ງພາໃນພຣະສັນຍາຂອງພຣະເຈົ້າ

68 “ຝ່າຍພຍານາກກໍຄຽດແຄ້ນຍິງນັ້ນ ຈຶ່ງອອກໄປສູ້ຮົບກັບເຊື້ອສາຍຂອງຍິງນັ້ນທີ່ເຫລືອຢູ່ ຄືພວກທີ່ຖືຮັກສາຂໍ້ບັນຍັດຂອງພຣະເຈົ້າ ແລະທີ່ຍຶດຖືຄໍາພຍານຝ່າຍພຣະເຢຊູ.” ພຣະນິມິດ 12:17

69 ເຫລົ່າຄົນບາບຜູ້ໜ້າສິງສານທີ່ຈະພິນາດໄດ້ຖືກພຣະຄຣິດທຽມເທັດຫລອກໃຫ້ເຊື່ອວ່າ ທີ່ຈະໄດ້ຮັບຄວາມບັນເທົາຈາກພັຍທໍຣະມານເຫລົ່ານີ້ ຈະຕ້ອງທໍາລາຍຄົນເຫລົ່ານັ້ນທີ່ຂັດຂວາງພວກເຂົາ ເຂົາຈຶ່ງຕັ້ງໃຈຊອກຫາຄົນຊອບທັມທັງຫລາຍທີ່ຍຶດພຣະທັມຂອງພຣະເຈົ້າຢ່າງໜຽວແໜ້ນເພື່ອຈະປະຫານໃຫ້ສິ້ນຊາກໃນວັນດຽວ

70 ນີ້ແຫລະ ຍຸທພູມຈິດວິນຍານ ຄືລະຫວ່າງຜູ້ເຮັດຕາມປະເພນີນິຍົມຂອງມະນຸດແລະນະມັດສະການສັດຮ້າຍ ພາກັນຕໍ່ສູ້ກັບຜູ້ທີ່ຮັກພຣະເຢຊູແລະເຮັດຕາມພຣະບັນຍັດຂອງພຣະອົງ ນີ້ຄືສິງຄາມອະວະສານໂລກ ຫລືອາຣະມະເຄດອນ ໃນທີ່ສຸດຄວາມຊົ່ວຮ້າຍຂອງໂລກກໍມາເຖິງຈຸດທີ່ພຣະເຈົ້າຈະບໍ່ຊົງຍອມໃຫ້ມັນອາລະວາດຕໍ່ໄປ ແລ້ວກໍເຖິງຄາວທີ່ພຣະເຈົ້າຈະຕ້ອງກ້າວເຂົ້າມາຊ່ອຍຄົນສັດຊື່ຂອງພຣະອົງໃຫ້ລອດ

## <u>ຕອນທີ່ 4 ຈອມກະສັດສະເດັດກັບມາ</u>

71 “ຄັນເວລາທ່ຽງຄືນກໍມີສຽງຮ້ອງມາວ່າ “ເບິ່ງແມ, ເຈົ້າບ່າວມາແລ້ວ ຈົ່ງອອກມາຮັບເພິ່ນສາ.” ມັດທາຍ 25:6

72 ຕອນທີ່ມືດມິດທີ່ສຸດນີ້ແຫລະ ຄວາມຫວັງທີ່ຕັ້ງໃຈລໍຄອຍມາດົນນານກໍຈະເປັນຄວາມຈິງ ພຣະສຸຣະສຽງຂອງພຣະເຈົ້າກໍຈະຕຣັດໃຫ້ເຮົາໄດ້ຍິນ

***<u>ພາກພິເສດ:</u>*** “ສໍາເຣັດແລ້ວ” “ສໍາເຣັດແລ້ວ”

73 ພຣະສຸຣະສຽງນີ້ດັງກັມປະນາດຂນາດໃນທັງສວັນສະເທືອນສະທ້ານ ແລ້ວກໍມີແຜ່ນດິນໄຫວໃຫຍ່ຫລວງເປັນເຄື່ອງໝາຍວ່າທັບຊາວສວັນອັນກຽງໄກກໍາລັງໃກ້ໂລກເຂົ້າມາແລ້ວ

74 ເຫລົ່າບຸດຫລານຂອງພຣະເຈົ້າ ເຊື່ອເມື່ອກ່ອນ ໆ ນີ້ພາກັນຢ້ານກົວຕົວສັ່ນໜ້າຊີດຊໍ່າກັບຄົນຕາຍບັດນີ້ຢືນຢ່າງພາກພູມຕໍ່ໜ້າຜູ້ກົດຂີ່ຂົ່ມເຫງເຂົາ ມີຣັດສມີສີຣຸ່ງຮອບຕົວ ໃບໜ້າເປັ່ງຣັດສມີສຸກໃສ ເພາະແນ່ໃຈວ່າພຣະຜູ້ຊ່ອຍໃຫ້ລອດສະເດັດມາຮັບພວກເຂົາກັບບ້ານດ້ວຍກອງທັບເທວະດາມະຫຶມາຂອງພຣະອົງ

75 “ເບິ່ງແມ, ພຣະອົງຈະສະເດັດມາມີເມກເປັນຂະບວນແຫ່ ຕາທຸກໜ່ວຍຈະເຫັນພຣະອົງ ແລະຄົນເຫລົ່ານັ້ນທີ່ໄດ້ແທງພຣະອົງຈະໄດ້ເຫັນພຣະອົງເໝືອນກັນ ມະນຸດທຸກຊາດທົ່ວໂລກຈະຮ້ອງໄຫ້ຮໍ່າໄຮເພາະພຣະອົງ ຈະເປັນໄປຢ່າງນັ້ນ ອາແມນ.” ພຣະນິມິດ 1:7

76 ນີ້ບໍ່ແມ່ນເປັນການພາໄປສວັນແບບລັບ ໆ (Secret Rapture) ທີ່ທ່ານໄດ້ຍິນມາ ເພາະທຸກຄົນໃນໂລກຈະໄດ້ເຫັນເຫດການອັນໃຫຍ່ຫລວງນີ້ ແລະຄົນສ່ວນຫລາຍຈະຢ້ານກົວຕົວສັ່ນກັບເຫດການນີ້

77 ຄົນບາບທັງຫລາຍພາກັນແລ່ນເພາະຄວາມຢ້ານແລະໄຮ້ຜົນຂຶ້ນເຂົາລົງຫ້ວຍ ເພື່ອຫາທາງຫລີ້ຊ່ອນກະສັດຜູ້ບໍຣິສຸດທີ່ກໍາລັງສະເດັດມາ ດັ່ງທີ່ພຣະເຢຊູໄດ້ຕຣັດທໍານວາຍໄວ້ນັ້ນ ຄົນຊົ່ວເຫລົ່ານັ້ນທີ່ໄດ້ດູໝິ່ນແລະຄຶງພຣະອົງຈະໄດ້ຖືກປຸກໃຫ້ຟື້ນຂຶ້ນມາຈາກຄວາມຕາຍ ເພື່ອຈະໄດ້ເຫັນຣັດສມີພາບແຫ່ງການສະເດັດກັບມາຂອງພຣະອົງ

78 “ດ້ວຍວ່າຈະມີຄໍາສັ່ງອັນດັງ, ຈະມີສຽງຂອງອັຄເທວະດາ, ແລະສຽງແກຂອງພຣະເຈົ້າ ແລ້ວອົງພຣະຜູ້ເປັນເຈົ້າຈະສະເດັດລົງມາຈາກສວັນ ພວກຄົນທີ່ເຊື່ອໃນພຣະຄຣິດທີ່ຕາຍໄປແລ້ວກໍຈະຄືນຂຶ້ນມາກ່ອນ.” 1 ເທຊະໂລນິກ 4:16

79 ສຽງແກຂອງພຣະເຈົ້າດັ່ງສັ່ນສນັ່ນຟ້າ ແລະພຣະສຸຣະສຽງຂອງພຣະເຢຊູຜູ້ຊ່ອຍໃຫ້ລອດກໍກູ່ກ້ອງຮ້ອງຮຽກເຫລົ່າຄົນຊອບທັມທັງຫລາຍທີ່ຕາຍໄປໃນອະດີດ ວ່າ

80 ***<u>ພາກພິເສດ:</u>*** “ຕື່ນເຖີດ, ຕື່ນເຖີດ, ຕື່ນເຖີດ ທ່ານຜູ້ຫລັບໄຫລໄປເປັນຜົງຂີ້ດິນ ຈົ່ງຕື່ນເຖີດ!”

81 ທຸງທັງໂລກ ຄົນຊອບທັມທັງປວງທີ່ໄດ້ລ່ວງລັບໄປກໍຕື່ນຂຶ້ນມາຈາກຫລັບໃຕ້ພື້ນປັດຕະພີ ງາມສງ່າດັ່ງເທວະບຸດເທວະດາ ມີກາຍາທິບທີ່ຈະບໍ່ຕາຍອີກ ບໍ່ມີຮ່ອງຮອຍແຫ່ງພຍາດບາດເຢົາຫລືຄວາມພິການແຕ່ຢ່າງນຶ່ງຢ່າງໃດເລີຍ ສ່ວນຜູ້ຊອບທັມທີ່ໄດ້ມີຊີວິດຟັນຝ່າຢູ່ໃນຄວາມລໍາບາກກໍໄດ້ຮັບການປ່ຽນແປງເປັນກາຍທິບໃນຄັ້ງດຽວກັນນີ້ດ້ວຍ ເຫລົ່າຄົນບາບທີ່ຢູ່ຮອບ ໆ ເຂົາໄດ້ມອງເຫັນການປ່ຽນແປງອັນໜ້າອັສຈັນນີ້ດ້ວຍຄວາມຢ້ານກົວ ກັງວົນແລະຕົກຕະລຶງ

82 “ຫລັງຈາກນັ້ນເຮົາທັງຫລາຍຜູ້ມີຊີວິດຍັງເປັນຢູ່ກໍຈະຖືກຮັບຂຶ້ນໄປໃນເມກພ້ອມກັນກັບຄົນພວກນັ້ນແລະຈະພົບອົງພຣະຜູ້ເປັນເຈົ້າໃນຟ້າອາກາດ ຢ່າງນັ້ນແຫລະ, ພວກເຮົາກໍຈະຢູ່ນໍາພຣະຜູ້ເປັນເຈົ້າເປັນນິດ.” 1 ເທຊະໂລນິກ 4:17

83 ຂນະທີ່ໂລກເບື້ອງລ່າງກຳລັງເດືອດຮ້ອນດ້ວຍຄວາມທຸກນານາປະການ ເຫລົ່າຜູ້ຊອບທັມພົ້ນຄວາມພິນາດໄດ້ຖືກຮັບຂື້ນໄປພົບກັບອົງພຣະຜູ້ເປັນເຈົ້າໃນທ້ອງຟ້າ ຖ້າມກາງເຫລົ່າເທວະດາມາກມາຍຈົນເບິ່ງຂາວຊ່ຳກັບເມກໃນທ້ອງຟ້າ ບັດນີ້ຄວາມໂສກເສົ້າ ຄວາມບາບ ຄວາມຕາຍ ກໍໄດ້ກາຍເປັນອະດີດໄປເສັຽແລ້ວ ຜ້າກັ້ງລະຫວ່າງເຂົາກັບພຣະເຈົ້າກໍໄດ້ຖືກກະຊາກອອກໄປເປັນນິດ ເຂົາສາມາດທີ່ຈະເຫັນພຣະເຈົ້າແລະເຫລົ່າເທວະດາຂອງພຣະອົງໜ້າຕໍ່ໜ້າສືບໄປໂດຍບໍ່ມີອັນໃດຂວາງກັ້ນອີກເລີຍ

84 "ແລະບັນດາຜູ້ທີ່ພຣະເຈົ້າຊົງປະຫານໃນວັນນັ້ນ ຈະມີຈາກປາຍໂລກຂ້າງນີ້ເຖິງປາຍໂລກຂ້າງນັ້ນ ເຂົາເຫລົ່ານັ້ນຈະບໍ່ມີໃຜຄວນຄາງໄຫ້ ຫລືຮວບຮວມຫລືຝັງໄວ້ ແຕ່ຈະເປັນເໝືອນມູລສັຕວ໌ເທິງແຜ່ນດິນ." ເຢເຣມີຢາ 25:33 (ພາສາໄທຍ໌)

85 ຂນະທີ່ພຣະເຢຊູສະເດັດກັບມານັ້ນ ໂລກໂກລະຫົນຫວຸ່ນວາຍ ສຽງຫວີດຫວິວຄວນຄາງຂອງເຫລົ່າປີສາດຊາຕານ ແຜ່ນດິນໄຫວ ມະຫາສະມຸດປັ່ນປ່ວນລວນເລ ແມ່ນແຕ່ເກາະກາງທະເລກໍສາບສູນຫາຍໄປ ເທິງຟ້າເມກດຳໝາທຶບ ພາຍຸໝາກເຫັບສາດລົງສູ່ຜືນໂລກຢ່າງໄຮ້ຄວາມປານີ

86 ເຫລົ່າຄົນຊົ່ວທີ່ລອດຈາກພັຍວິບັດອັນໜ້າຢ້ານນີ້ ທົນພຣະຣັດສມີແຫ່ງການສະເດັດກັບມາບໍ່ໄຫວຈຶ່ງຖືກທຳລາຍໃຫ້ຕາຍໝົດ ຊາກສົບຂອງຄົນເຫລົ່ານີ້ມີກາດເກື້ອນທົ່ວພື້ນແຜ່ນດິນໂລກ ນັບເປັນຄັ້ງທຳອິດຕັ້ງແຕ່ສ້າງໂລກ ທີ່ໂລກນີ້ດູເໝືອນປາສະຈາກຊີວິດມະນຸດ ມີແຕ່ຊາຕານກັບພັກພວກຂອງມັນເທົ່ານັ້ນທີ່ຖືກປ່ອຍຖິ້ມໄວ້ຜະເຊີນກັບຜົນແຫ່ງການກະບົດຂອງພວກມັນ

## <u>ຕອນ 5 ຣະຍະພັນປີ</u>

87 "ແລ້ວຂ້າພະເຈົ້າໄດ້ເຫັນເທວະດາຕົນນຶ່ງລົງມາຈາກສວັນ ເພິ່ນຖືຂໍກະແຈຂອງເຫວເລິກ ແລະຖືໂສ້ເສັ້ນໃຫຍ່. ເພິ່ນໄດ້ຈັບພຍານາກຊຶ່ງເປັນງູແຕ່ເດີມດຳບັນ ຄືພຍານາກແລະຊາຕານ ແລະໄດ້ຜູກມັນໄວ້ລະຫວ່າງພັນປີ." ພຣະນິມິດ 20:1-2

88 ແນມໄປທິດໃດມີແຕ່ຄວາມພິນາດທີ່ມັນກໍ່ຂື້ນ ຊາຕານແລະເຫລົ່າທູດຂອງມັນຮູ້ວ່າຈະຖືກຂັງໄວ້ໃນໂລກນີ້ ນຶ່ງພັນປີເສັຽແລ້ວ ມັນຖືກຈອງຈຳໄວ້ໃນໂລກທີ່ມືດເປົ່າປ່ຽວ ໄຮ້ຊີວິດໃດ ໆ ທັງໝົດຂນະທີ່ຢູ່ຢ່າງໂດດດ່ຽວກັບພວກຂອງມັນ ຊາຕານຈຶ່ງມີເວລາຄຶດໄຕ່ຄວນເຖິງໂທດທີ່ມັນຈະໄດ້ຮັບ ບໍ່ວ່າຈະມອງໄປທິດໃດເຫັນແຕ່ຊາກຫັກພັງຂອງເມືອງມະຫານະຄອນ ປ່າດົງພົງໄພກໍຖືກໄໝ້ເສັຽລາບຄາບ ເຫັນກະດູກແຫ້ງລຽງລາຍຢູ່ທົ່ວໄປ ນີ້ຄືຜົນຂອງມະຫາສົງຄາມທີ່ມັນກໍ່ຂື້ນສູ້ຮົບກັບຊາວສວັນ ເມື່ອຖືກຂັງໃນເຫວເລິກເຊັ່ນນີ້ ບໍ່ມີໃຜທີ່ມັນຈະຫລອກລວງໄດ້ ຊ່າງເປັນສະພາບທີ່ແສນທໍຣະມານສຳລັບມັນເຫລືອເກີນ

89 "ແລ້ວຂ້າພະເຈົ້າໄດ້ເຫັນບັນລັງຫລາຍອັນ ແລະຜູ້ທີ່ນັ່ງເທິງບັນລັງນັ້ນເປັນຜູ້ທີ່ໄດ້ຮັບພຣະຣາຊ ທານອຳນາດພິພາກສາ......ນອກຈາກຄົນເຫລົ່ານີ້ແລະຄົນອື່ນ ໆ ທີ່ຕາຍແລ້ວບໍ່ໄດ້ກັບມີຊີວິດອີກ ຈົນກວ່າ ພັນປີລ່ວງໄປແລ້ວ." ພຣະນິມິດ 20:4-5

90 ຂນະທີ່ຊາຕານຖືກປ່ອຍໄວ້ໃຫ້ໄຄ່ຄວນເຖິງໂທດຂອງມັນ ເຫລົ່າຜູ້ໄດ້ຊອບທັມກໍໄດ້ສເວີຍສຸກຢ່າງ ສຸດທີ່ຈະບັນຣະຍາຍໄດ້ໃນສວັນ ເຂົາຕ່າງໄດ້ພົບເທວະດາປະຈຳຕົວຂອງຕົນ ແລະໄດ້ໄຕ່ຖາມເຖິງເລື່ອງ ລາວເບື້ອງຊີວິດໃນໂລກຂອງຕົນ

91 ແລ້ວພຣະເຈົ້າໄດ້ເປີດເຜີຍຄວາມລັບທັງປວງທີ່ໄດ້ເກັບຊ້ອນໄວ້ ໂດຍໄດ້ເຊີນໃຫ້ຜູ້ຊອບທັມທັງປວງ ຮ່ວມເປັນຜູ້ພິພາກສາກັບພຣະອົງ ໜັງສືບັນທຶກປະວັດຂອງຄົນບາບທັງປວງໄດ້ຖືກເປີດອອກ ແລ້ວບັດນີ້ ຜູ້ຊອບທັມເຫລົ່ານີ້ໄດ້ປະຈັກດ້ວຍຕົນເອງວ່າ ເປັນຫຍັງບາງຄົນທີ່ເຂົາຄິດວ່າຈະໄດ້ໄປສວັນບໍ່ໄດ້ຢູ່ທີ່ ນັ້ນໃນວັນນັ້ນ

92 ແມ່ນຄວາມຄິດຂອງຄົນບາບທີ່ບໍ່ເຄີຍມີໃຜຮູ້ ກໍຖືກເຜີຍອອກກະຈ່າງແຈ້ງ ຜ້າກັ້ງໄດ້ຖືກເປີດອອກ ໃຫ້ເຫັນການຕໍ່ສູ່ໃນໃຈຂອງແຕ່ລະຄົນ ແມ່ນການກະທຳແລະເຈຕະນາຂອງເທວະດາຊົ່ວເຫລົ່ານັ້ນກໍຖືກ ເປີດເຜີຍຢ່າງແຈ່ມແຈ້ງດ້ວຍ

93 ມະຫັດສະຈັນແທ້ ທີ່ພຣະລັກສະນະນິສັຍຂອງພຣະເຈົ້າກໍຖືກເຜີຍໃຫ້ເຮົາຮູ້ດ້ວຍ ດັ່ງທ່ານອັຄສາ ວົກໂປໂລໄດ້ທຳນວາຍໄວ້ໃນໜັງສືພຣະຄັມພີ 1 ໂກຣິນໂທ 6:2 ວ່າ ຄົນທີ່ຖືກຊ່ອຍໃຫ້ລອດໄດ້ຮ່ວມພິ ພາກສາຄົນທີ່ຕ້ອງພິນາດ ກ່ອນທີ່ແມ່ນແຕ່ຄົນດຽວຈະຖືກລົງໂທດ ປະວັດຂອງເຂົາຈະຕ້ອງໄດ້ຮັບການ ສອບສວນຢ່າງລະອຽດຖີ່ຖ້ວນໂດຍມະນຸດດ້ວຍກັນທີ່ຮູ້ວ່າຊີວິດການຕໍ່ສູ້ໃນໂລກນີ້ເປັນຢ່າງໃດ ຄຳເວົ້າ ແລະການກະທຳທຸກຢ່າງໄດ້ຖືກນຳມາທຽບກັບມາຕະຖານຂອງພຣະເຈົ້າ ການຕັດສິນລົງໂທດພວກເຂົາ ທຸກຄະດີກໍໄດ້ຮັບການສອບສວນຢ່າງຮອບຄອບ

94 ໃນທີ່ສຸດເມື່ອພັນປີໄດ້ສິ້ນສຸດລົງ ພຣະເຢຊູແລະເຫລົ່າຜູ້ຊອບທັມຕຽມຕົວທີ່ຈະກັບສູ່ໂລກອີກເທື່ອ ນຶ່ງ ເວລາກໍມາເຖິງຊາຕານກັບພວກຂອງມັນແລະເຫລົ່າຄົນບາບທັງປວງ ຈະໄດ້ຮັບໂທດທີ່ສົມກັບການກະ ທຳຂອງພວກເຂົາ ໃນບໍ່ຊ້າເທົ່າໃດພວກຄົນທີ່ມີໃຈຖ່ອມສຸພາບຈະໄດ້ຄອບຄອງແຜ່ນດິນໂລກ ແຕ່ພຣະເຈົ້າ ຕ້ອງລົງໂທດຄົນບາບແລະລຶບລ້າງຄວາມບາບໃຫ້ໝົດກ້ຽງໄປຈາກອານາຈັກໂລກນີ້ເສັຽກ່ອນ

## ຕອນທີ່ 6 ອະວະສານຂອງຄວາມບາບ

95 “ຂ້າພະເຈົ້າໄດ້ເຫັນນະຄອນສັກສິດ ຄືກຸງເຢຣູຊາເລັມໃໝ່ ກຳລັງລົງມາຈາກສວັນແລະຈາກພຣະເຈົ້າ ນະຄອນນີ້ໄດ້ຈັດຕຽມໄວ້ແລ້ວເໝືອນດັ່ງເຈົ້າສາວແຕ່ງຕົວໄວ້ສຳລັບເຈົ້າບ່າວ.” ພຣະນິມິດ 21:2

96 ຄັນໄດ້ອາສັຍໃນສວັນພັນປີແລ້ວ ພຣະເຢຊູພ້ອມເຫລົ່າຜູ້ຊອບທັມແລະເມືອງເຢຣູຊາເລັມໃໝ່ກໍໄດ້ກັບມາສູ່ໂລກ ຂນະທີ່ມະຫານະຄອນນີ້ລອຍລົງມາໃກ້ພື້ນໂລກທີ່ວ່າງເປົ່າ ພຣະເຢຊູໄດ້ມີພຣະບັນຊາໃຫ້ຄົນບາບທີ່ຕາຍໄປນັ້ນຟື້ນຈາກຄວາມຕາຍ ຜູ້ບໍ່ໄດ້ຮັບຄວາມລອດຈາກທຸກຍຸກທຸກສມັຍກໍໄດ້ຟື້ນຂຶ້ນມາສູ່ຊີວິດອີກເທື່ອນຶ່ງຢືນຢູ່ຕໍ່ພຣະພັກພຣະເຈົ້າ ສະພາບເຂົາເປັນເຊັ່ນໃດກ່ອນສິ້ນຊີວິດ ແລ້ວບັດນີ້ກໍເປັນເຊັ່ນນັ້ນ

97 ຂນະທີ່ພຣະເຢຊູເຫາະໃກ້ພື້ນໂລກເຂົ້າມາ ເມື່ອພຣະບາດແຕະພື້ນໂລກທີ່ພູເຂົາໝາກກອກເທດຈຶ່ງເກີດແຜ່ນດິນໄຫວໃຫຍ່ຫລວງ ຈົນເຮັດໃຫ້ພື້ນແຜ່ນດິນຖິ່ນນັ້ນກາຍເປັນທົ່ງຮາບໃຫຍ່ແນມເບິ່ງສຸດສາຍຕາ ແລ້ວເຢຣູຊາເລັມໃໝ່ກໍໄດ້ລອຍລົງມາຈາກສວັນພ້ອມທັງຖານລົງມາຕັ້ງເທິງທີ່ຮາບໃຫຍ່ ທີ່ພຣະຄຣິດໄດ້ຈັດຕຽມໄວ້ນັ້ນ

98 “ເມື່ອພັນປີລ່ວງໄປແລ້ວ ຊາຕານຈະຖືກປ່ອຍອອກຈາກຄຸກບ່ອນຂັງມັນໄວ້. ມັນຈະອອກໄປຫລອກລວງບັນດາປະຊາຊາດ ທີ່ຢູ່ທົດທັງສີ່ຂອງແຜ່ນດິນໂລກ.....ໃຫ້ມາໂຮມກັນເພື່ອການຮົບເສິກ.” ພຣະນິມິດ 20:7-8

99 ຊາຕານລວງຄົນໄດ້ອີກເປັນຄັ້ງນຶ່ງຢ່າງໜ້າປລາດ ມັນໄດ້ຊັກຈູງເຂົາໃຫ້ມາຕີເອົາເມືອງນີ້ດ້ວຍກຳລັງ ເຫລົ່ານາຍພົນ ຈອມທັບຈາກທຸກຍຸກທຸກສມັຍ ຮ່ວມມືກັນໃຊ້ຄວາມເກັ່ງກ້າເຮັດສົງຄາມຄັ້ງສຸດທ້າຍໂດຍການນີ້ຄົນບາບທັງປວງໄດ້ສະແດງຕໍ່ຊາວສວັນວ່າເຂົາໄດ້ກັບໃຈໃໝ່ບໍ່ ຖ້າເປັນໄດ້ເຂົາຄົງຈະຍຶດເອົາມະຫານະຄອນນີ້ແລະຖອດພຣະເຈົ້າຈາກບັນລັງຂອງພຣະອົງ ແຕ່ເຂົາຮູ້ບໍ່ວ່າກອງທັບມະຫືມາທີ່ຕັ້ງສົງຄາມຢູ່ນີ້ບໍ່ໄດ້ມີຄວາມໝາຍຕໍ່ພຣະເຈົ້າ ພວກເຂົາເສັຽຊັຍກ່ອນທີ່ຈະເລີ່ມ ການພິພາກສາໄດ້ມາເຖິງເຂົາແລ້ວ

100 “ຂ້າພະເຈົ້າໄດ້ເຫັນບັນດາຜູ້ທີ່ຕາຍແລ້ວ ທັງຜູ້ໃຫຍ່ແລະຜູ້ນ້ອຍ ຢືນຢູ່ຕໍ່ໜ້າຣາຊບັນລັງນັ້ນ ແລະໜັງສືຕ່າງ ໆ ກໍໄຂອອກ ມີໜັງສືເຫລັ້ມນຶ່ງກໍໄຂອອກ ຄືທະບຽນແຫ່ງຊີວິດແລະຄົນທັງຫລາຍທີ່ຕາຍແລ້ວກໍຖືກຊົງພິພາກສາ ຕາມການປະຕິບັດຂອງເຂົາທີ່ຂຽນໄວ້ໃນໜັງສືເຫລົ່ານັ້ນ.” ພຣະນິມິດ 20:12

101 ແລ້ວບັດນັ້ນ ພຣະເຈົ້າໄດ້ປາກົດຢ່າງເຕັມດ້ວຍຣັດສມີຂອງພຣະອົງເທິງບັນລັງກໍເໝືອນມະຫານະຄອນນັ້ນ ເລ່ກິນອັນໄຮ້ຄວາມໝາຍທຸກຢ່າງຂອງພວກເຂົາກໍໄດ້ຊະງັກລົງທັນທີ

102 ພວກເຂົາພາກັນຈ້ອງທີ່ພຣະພັກຂອງພຣະເຈົ້າ ເຫລົ່າຄົນບາບຜູ້ທີ່ກຳລັງຈະພິນາດນີ້ໄດ້ຮັບການເຕືອນໃຫ້ລະນຶກເຖິງຄວາມບາບທີ່ພວກເຂົາໄດ້ກໍ່ເອົາໄວ້ ລະນຶກເຖິງທຸກເທື່ອທີ່ເຂົາໄດ້ຝືນຄວາມຮູ້ສຶກຜິດຊອບເຮັດບາບ ທຸກເທື່ອທີ່ເຂົາໄດ້ປະຕິເສດພຣະວິນຍານບໍຣິສຸດ ບາງຄົນໄດ້ຕາຍໂດຍກຳຄວາມລັບໄວ້ຫວັງວ່າຈະບໍ່ມີໃຜຮູ້ ທີ່ເຂົາໄດ້ຂ້າຄົນແລະເຮັດຊົ່ວນານາປະການ ດ້ວຍຄວາມອັບອາຍອັນຍິ່ງໃຫຍ່ ຕາມທີ່ພຣະເຢຊູໄດ້ຕຣັດໄວ້ໃນພຣະຄັມພີລູກາບົດທີ່ 12:2 ວ່າ "ແຕ່ບໍ່ມີສິ່ງໃດປົດບັງໄວ້ທີ່ຈະບໍ່ເປີດເຜີຍ ຫລືສິ່ງລັບທີ່ບໍ່ຢາກປາກົດໃຫ້ຮູ້." ຂນະພາບໃນອະດີດຂອງພວກເຂົາສາຍອອກມາຕໍ່ໜ້າຄົນທັງປວງແຕ່ລະຄົນກໍຕະໜັກວ່າເຂົາໄດ້ປະຕິເສດຄວາມລອດຂອງພຣະເຈົ້າດ້ວຍຄວາມສະມັກໃຈຂອງເຂົາເອງແລ້ວ

103 ໜ້າສົມເພດຫລາຍ ທີ່ເຂົາບໍ່ສາມາດຈະຊີງເອົາຄວາມສຸກຂອງຄົນທີ່ຢູ່ໃນມະຫານະຄອນນີ້ໄດ້ບໍ່ວ່າຈະດ້ວຍວິທີໃດ ຄວາມຮູ້ສຶກໝົດຫວັງເກາະກຸມໃຈຂອງເຂົາຢ່າງສຸດຂີດ ແມ່ນແຕ່ການກະບົດກໍ່ບໍ່ຊ່ອຍເຂົາໃຫ້ປະຕິເສດຄວາມຍຸດຕິທັມຂອງພຣະເຈົ້າທີ່ປະກາດຄວາມຜິດຂອງພວກເຂົາໄດ້ ເຂົາຮ້ອງຕະໂກນກ້ອງສຸດສຽງພ້ອມກັນວ່າ "ທາງຂອງພຣະອົງນັ້ນຍຸດຕິທັມແລະຊື່ຈິງແທ້ ໆ ໂອ່ຈອມກະສັດຜູ້ຊອບທັມ" ແລະແລ້ວກໍ່ພາກັນກົ້ມລົງກາບນະມັດສະການເຈົ້າຊາຍຜູ້ເປັນເຈົ້າແຫ່ງຊີວິດຂອງຄົນທັງປວງ

104 "ເຂົາໄດ້ຍົກທັບອອກໄປທົ່ວໜ້າແຜ່ນດິນ ແລ້ວອ້ອມຄ້າຍພວກໄພ່ພົນຂອງພຣະເຈົ້າກັບນະຄອນທີ່ພຣະອົງຊົງຮັກນັ້ນ ແຕ່ໄຟໄດ້ຕົກລົງມາຈາກສວັນລ້າງຜານຄົນເຫລົ່ານັ້ນເສັຽ." ພຣະນິມິດ 20:9

105 ໃນທີ່ສຸດ ເວລາກໍມາເຖິງທີ່ຄົນບາບເຫລົ່ານັ້ນຕ້ອງປະເຊີນກັບຜົນກັມທີ່ເຂົາໄດ້ກໍ່ເອົາໄວ້ຢ່າງຫລີກລຽງບໍ່ໄດ້ ໂດຍບໍ່ມີການບອກລ່ວງໜ້າ ໄຟກັມມະຖັນຈາກຟ້າ ໄຟຈາກໃຕ້ພື້ນແຜ່ນດິນລະເບີດຂຶ້ນມາສູ່ພື້ນໂລກຂນະທີ່ຄົນບາບທັງຫລາຍຖືກໄໝ້ວອດວາຍຢູ່ນອກມະຫານະຄອນນີ້ ຄົນຊອບທັມທັງຫລາຍປອດພັຍຢູ່ພາຍໃນກຳແພງເມືອງເຢຣູຊາເລັມໃຫຍ່ນັ້ນເອງ

106 ຄົນບາບແຕ່ລະຄົນໄດ້ຮັບໂທດຕາມການກະທຳຂອງເຂົາ ຜູ້ທີ່ມີບາບນ້ອຍກໍຖືກເຜົາທຳລາຍຢ່າງລວດເລວ ຜູ້ທີ່ກໍກັມເວນໄວ້ຫລາຍກໍຕາຍຢ່າງທໍຣະມານນານແດ່ນ້ອຍນຶ່ງ ສ່ວນຊາຕານຜູ້ໃຫ້ກຳເນີດຄວາມບາບໄດ້ຖືກລົງໂທດນານກວ່າຄົນອື່ນໃດທັງໝົດ ການລົງໂທດຄົນບາບນີ້ກໍ່ຄວາມເຈັບປວດໃນພຣະທັຍພຣະເຈົ້າເປັນທີ່ສຸດ ແຕ່ຕາມຂະບວນຄວາມຍຸດຕິທັມຂອງພຣະອົງນັ້ນມັນຫລີກລຽງບໍ່ໄດ້ແທ້ ໆ

107 ໂທດຂອງບາບຄືຄວາມຕາຍ ພຣະເຢຊູໄດ້ຊົງຍອມທົນທຸກສິ້ນພຣະຊົນເທິງໄມ້ກາງແຂນກໍເພື່ອຄວາມຕາຍອັນນີ້ເອງ ຖ້າໃຜຍອມຮັບການເສັຽສະລະຂອງພຣະອົງກໍຈະໄດ້ລອດພົ້ນຈາກຄວາມຕາຍໃນໄຟກັມມະຖັນອັນນີ້ແຫລະ, ແຕ່ໜ້າອີດູຕົນທີ່ຄົນທັງຫລາຍໄດ້ປະຕິເສດພຣະເຢຊູ ດັ່ງນັ້ນເຂົາຈຶ່ງຕ້ອງຮັບຜົນອັນໜ້າຢ້ານນີ້ດ້ວຍຕົວເອງ

108 "ຈົ່ງເບິ່ງ ເມື່ອວັນນັ້ນມາເຖິງ ຄົນອວດດີທຸກຄົນ ຕລອດຄົນຊົ່ວທຸກຄົນຈະຖືກເຜົາເໝືອນເຜົາເຟືອງ ...ແລະເຂົາຈະເປັນເໝືອນຂີ້ຝຸ່ນຢູ່ໃຕ້ຕີນຂອງເຈົ້າ." ມາລາຄີ 4:1-3

109 ເມື່ອໄຟລົງໂທດນັ້ນໄດ້ດັບລົງ ປະຊາກອນທົ່ວເອກພົບຂອງພຣະເຈົ້າຕ່າງກໍເວົ້າແລະສັນລະເສີນພຣະເຈົ້າເປັນສຽງດຽວກັນ ທີ່ການກໍ່ກັມເຮັດການກະບົດຂອງຊາຕານໄດ້ສິ້ນສຸດລົງແລ້ວ ສັນຕິສຸກໄດ້ກັບສູ່ອານາຈັກອັນຕລອດໄປເປັນນິດຂອງພຣະອົງອີກ ຄາວນີ້ພຣະເຈົ້າຊົງຫັນພຣະທັຍໄປສູ່ການສ້າງໂລກແລະນະພາອາກາດໃໝ່ອີກເທື່ອນຶ່ງ

## ຕອນທີ່ 7 ໂລກໃໝ່

110 "ແລ້ວຂ້າພະເຈົ້າໄດ້ເຫັນທ້ອງຟ້າໃໝ່ແລະແຜ່ນດິນໂລກໃໝ່ ເພາະວ່າທ້ອງຟ້າເດີມແລະແຜ່ນດິນໂລກເດີມນັ້ນໄດ້ລ່ວງໄປແລ້ວ..." ພຣະນິມິດ 21:1

111 ຫລັງຈາກໂລກນີ້ຖືກຊໍາຣະດ້ວຍໄຟແລ້ວ ພຣະເຈົ້າກໍຊົງສ້າງໂລກໃໝ່ອີກເທື່ອນຶ່ງ ດ້ວຍຄໍາຕຣັດຂອງພຣະອົງ ໂລກນີ້ຖືກສ້າງໃຫ້ສວຍສົດງົດງາມດັ່ງເອເດນສມັຍກ່ອນ ພຽງແຕ່ພຣະອົງຕຣັດເທົ່ານັ້ນພືດຜັກອັນຂຽວສົດງົດງາມກໍປົກຄຸມແຜ່ນດິນໂລກ ດ້ວຍພຣະບັນຊາຂອງພຣະອົງນັ້ນ ໃນນໍ້າແລະເທິງພື້ນປັດຕະພີກໍເຕັມດ້ວຍຊີວິດຂອງສັດໃຫຍ່ນ້ອຍທັງມວນ ສັດເຫລົ່ານີ້ພາກັນຊື່ນຊົມກັບສິ່ງທີ່ພຣະເຈົ້າໄດ້ຊົງສ້າງໄວ້ທົ່ວໄປໃນໂລກແຫ່ງສວັນ ໃນອາກາດກໍສົດຊື່ນເບີກບານໂລກທັງໂລກກາຍເປັນເຊັ່ນຕູ້ໂຊງານສິນເອກຂອງພຣະເຈົ້າ

112 "ພຣະເຈົ້າຊົງເຊັດນໍ້າຕາທຸກ ໆ ຢົດຈາກຕາຂອງເຂົາ ຄວາມຕາຍຈະບໍ່ມີອີກຕໍ່ໄປ ຄວາມໂສກເສົ້າການຮ້ອງໄຫ້, ແລະຄວາມເຈັບປວດຈະບໍ່ມີອີກຕໍ່ໄປ ເພາະວ່າສິ່ງທີ່ມີຢູ່ຄາວກ່ອນນັ້ນກໍລ່ວງໄປແລ້ວ." ພຣະນິມິດ 21:4

113 ບັດນີ້ທັງເອກະພົບຂອງພຣະເຈົ້າໄດ້ມີສັນຕິສຸກແລ້ວ ໃນນະຄອນຫລວງເຢຣູຊາເລັມໃໝ່ນີ້ປະຊາຊົນພາກັນໂຮ່ຮ້ອງສັນລະເສີນພາຍໃຕ້ການປົກຄອງຂອງພຣະເຈົ້າ ຄົນເຫລົ່ານັ້ນທີ່ພຣະເຈົ້າຊ່ອຍໄວ້ກໍພາກັນສະແດງຄວາມຮັກຕໍ່ພຣະເຈົ້າຂອງເຂົາ ບໍ່ມີມະນຸດໃດໃນເອກະພົບຂອງພຣະເຈົ້າອາດເຂົ້າໃຈໄດ້

114 ແມ່ນວ່າຄົນບາບແລະຄວາມບາບຈະຖືກທໍາລາຍໃຫ້ສິ້ນຊາກໄປແລ້ວ ແຕ່ມີສິ່ງນຶ່ງທີ່ຈາຣຶກຜົນຂອງການກະບົດສືບໄປບໍ່ມີວັນສິ້ນສຸດ

115 ເດັນຍິງນ້ອຍ ໆ: "ອັນໃດເກີດຂຶ້ນກັບພຣະຫັດຂອງພຣະອົງ"

116 ມັນຄືຮອຍແຜເປັນທີ່ພຣະຫັດ ພຣະບາດ ແລະທີ່ສີຂ້າງຂອງພຣະເຢຊູ

117 ວັນເວລາທີ່ພວກເຂົາໄດ້ມີຄວາມສຸກກະເສມຜ່ານໄປໃນນິລັນການ ຄວາມທຸກລຳບາກທີ່ແສນເຂັນທີ່ເຄີຍໄດ້ຮັບໃນໂລກນັ້ນກໍຄ່ອຍຫາຍສາບສູນໄປໃນຄວາມສົມບູນພູນສຸກຂອງສວັນ ໂດຍບໍ່ມີອຸປສັກໃນຊີວິດ ຄາວນີ້ບຸດທິດາຂອງພຣະເຈົ້າຫາກມີໃຈໃຝ່ຝັນອັນໃດກໍອາດຈະເຮັດໃຫ້ຕາມໃຈປາຖນາຂອງເຂົາ ໂດຍການຮຽນເພື່ອຫາຄວາມຮູ້ອັນບໍ່ມີຈົບສິ້ນຈະກະຕຸ້ນສມອງຂອງເຂົາໃຫ້ຕື່ນຕົວຢູ່ສເມີ ເມື່ອບໍ່ຖືກກຳຈັດໄວ້ໃນໂລກນີ້ອີກແລ້ວ ເຫລົ່າຜູ້ໄດ້ລອດທັງຫລາຍກໍພາກັນທ່ອງທ່ຽວໄປໃນໂລກຕ່າງ ໆ ຂອງພຣະເຈົ້າຢ່າງບໍ່ສິ້ນສຸດ ສວັນເປັນບ່ອນທີ່ມີຄວາມສງົບສຸກເປັນນິ່ງດຽວກັນ ເພາະຄວາມຮັກຂອງເຈົ້າຢູ່ໃນຈິດໃຈຂອງທຸກຄົນຢ່າງລົ້ນເຫລືອ

118 ພຣະຄັມພີໄດ້ມີພຣະສັນຍາວ່າ ສວັນທີ່ກຳລັງຈະມານີ້ສາມາດທີ່ຈະເປັນບ້ານນິຣັນດອນຂອງທ່ານໄດ້ດ້ວຍ ພຣະເຢຊູໄດ້ສະລະພຣະຊົນຂອງພຣະອົງເທິງໄມ້ກາງແຂນກໍເພື່ອທ່ານຈະໄດ້ຮັບການຍົກໂທດ ແລະມີຊັຍຊະນະເໜືອຄວາມບາບຂອງທ່ານຫລາຍກວ່າອື່ນໃດທັງໝົດ ພຣະເຢຊູຊົງມີພຣະປະສົງທີ່ຈະໃຫ້ທ່ານໄດ້ອາສັຍຢູ່ກັບພຣະອົງໃນສວັນ ທີ່ພຣະອົງຈະຊົງສ້າງຂຶ້ນໃໝ່ນັ້ນ ແລະຂນະທີ່ພຣະອົງພຍາຍາມຢ່າງເຕັມທີ່ ທີ່ຈະຊ່ອຍທ່ານໃຫ້ໄດ້ຮັບຄວາມລອດ ພຣະອົງກໍບໍ່ຊົງສາມາດທີ່ຈະບັງຄັບທ່ານໃຫ້ຮັບຂອງປະທານຈາກພຣະອົງໄດ້ຢ່າງເດັດຂາດເຊັ່ນກັນ ທ່ານຈະຕ້ອງເລືອກທີ່ຈະຮັບດ້ວຍຕົວທ່ານເອງທ່ານຈະບໍ່ເຂົ້າມາຫາພຣະອົງວັນນີ້ຫລື? ກະຣຸນາເຊີນພຣະອົງວັນນີ້ ແລ້ວພຣະອົງຈະສະເດັດມາປະທັບໃນໃຈທ່ານ

ຂອບຄຸນພຣະເຈົ້າ

ຂໍພຣະເຈົ້າອວຍພອນ